# ກົດລະບຽບຂອງຜູ້ຈຳໜ່າຍ

ຢູ່ Fruit of the Loom ແລະ ບັນດາບໍລິສັດໃນເຄືອຂ່າຍຂອງພວກເຮົາ ("FOTL"),
ພວກເຮົາມີພັນທະໃນການດຳເນີນທຸລະກິດໃຫ້ສອດຄ່ອງກັບມາດຕະຖານສູງສຸດຂອງຈັນຍາບັນດ້ານທຸລະກິດ ແລະ ເຄົາລົບສິດທິຂອງມະນຸດ ແລະ ສະພາບແວດລ້ອມ. ພວກເຮົາຕ້ອງການຄຳໝັ້ນສັນຍາດຽວກັນຈາກສູນຈຳໜ່າຍທຸກແຫ່ງທີ່ຈຳໜ່າຍຜະລິດຕະພັນຂອງພວກເຮົາ, ລວມທັງ, ແຕ່ບໍ່ຈຳກັດສະເພາະ, ບັນດາຜູ້ຮັບເໝົາ, ຜູ້ໄດ້ຮັບອະນຸຍາດ ແລະ ຄູ່ຮ່ວມທຸລະກິດອື່ນໆ (ລວມກັນເອີ້ນວ່າ "ຜູ້ຈຳໜ່າຍ").
ກົດລະບຽບຂອງຜູ້ຈຳໜ່າຍສະບັບນີ້ສອດຄ່ອງກັບມາດຕະຖານ ຊຶ່ງພວກເຮົາໝັ້ນໃຈວ່າ ຜູ້ຈຳໜ່າຍຈະຕ້ອງເຮັດຕາມຄຳໝັ້ນສັນຍາ ແລະ ໄດ້ຮັບຄຳແນະນຳຈາກກົດເກນທີ່ລະບຸຢູ່ໃນຂອງຂໍ້ຕົກລົງທີ່ເປັນພື້ນຖານຂອງອົງການແຮງງານລະຫວ່າງປະເທດ ແລະ
ກົດລະບຽບຢູ່ໃນສະຖານທີ່ເຮັດວຽກຂອງສະມາຄົມແຮງງານທີ່ເປັນທຳ.

## *ປະຊາຊົນ-ເປັນສູນກາງ*

ສາຍພົວພັນໃນການວ່າຈ້າງ:ຜູ້ຈັດຈຳໜ່າຍຈະຍອມຮັບ ແລະ ຕິດພັນກັບຫຼັກການ ແລະ ເງື່ອນໄຂຂອງການວ່າຈ້າງ ທີ່ເຄົາລົບກຳມະກອນ, ແລະ ປົກປ້ອງສິດທິຂອງພວກເຂົາຢ່າງໜ້ອຍສຸດ ພາຍໃຕ້ບັນດາກົດໝາຍ ແລະ ກົດລະບຽບວ່າດ້ວຍແຮງງານ ແລະ ປະກັນສັງຄົມໃນລະດັບຊາດ ແລະ ລະດັບສາກົນ.

ຜູ້ຈັດຈຳໜ່າຍດ້ານສຸຂະພາບ ແລະ ຄວາມປອດໄພຜູ້ຈັດຈຳໜ່າຍ ຈະຕ້ອງຈັດຫາສະຖານທີ່ເຮັດວຽກທີ່ປອດໄພ ແລະ ເຮັດໃຫ້ມີສຸຂະພາບດີ ເພື່ອປ້ອງກັນອຸບັດຕິເຫດ ແລະ ການບາດເຈັບຕໍ່ສຸຂະພາບທີ່ເກີດຈາກການປະຕິບັດວຽກງານຂອງຜູ້ຈັດຈຳໜ່າຍ.
ສະພາບຂອງສະຖານທີ່ເຮັດວຽກຂອງຜູ້ຈັດຈຳໜ່າຍ ລວມທັງ: ບັນດາຫໍພັກຕ່າງໆທີ່ຜູ້ຈັດຈຳໜ່າຍເປັນເຈົ້າຂອງ ຫຼື ຈັດຕັ້ງປະຕິບັດວຽກງານ, ຕ້ອງມີຄວາມປອດໄພ, ສະອາດ ແລະ ໄດ້ຕາມເງື່ອນໄຂຂອງກົດໝາຍ ແລະ ກົດລະບຽບທຸກຢ່າງກ່ຽວກັບຄວາມປອດໄພ ແລະ ສຸຂະພາບ.
ກຳມະກອນຕ້ອງໄດ້ຮັບການຝຶກອົບຮົມ ແລະ ປະກອບມີເຄື່ອງມືໃນການເຮັດວຽກຢ່າງປອດໄພ.

ແຮງງານເດັກ:ຜູ້ຈັດຈຳໜ່າຍ ຈະບໍ່ຈ້າງບຸກຄົນທີ່ລະເມີດກົດລະບຽບຄຳສັ່ງຂອງທ້ອງຖິ່ນກ່ຽວກັບເກັນອາຍຸເຂົ້າໂຮງຮຽນ ຫຼື
ພາຍໃຕ້ກົດໝາຍທີ່ກ່ຽວຂ້ອງດ້ານເກນອາຍຸຂອງການວ່າຈ້າງ. ຜູ້ຈັດຈຳໜ່າຍ ຈະບໍ່ຈ້າງກຳມະກອນທີ່ມີອາຍຸຕ່ຳກວ່າ 15 ປີ ໃນທຸກກໍລະນີ ຍົກເວັ້ນ ນັກສະແດງຫຼື ນາຍແບບທີ່ເປັນເດັກນ້ອຍ ຊຶ່ງຖືກໃຊ້ເປັນການໂຄສະນາ ຫຼື ສື່ມວນຊົນ, ແລະ ສອດຄ່ອງກັບກົດລະບຽບທາງດ້ານແຮງງານຂອງເດັກນ້ອຍທີ່ກ່ຽວຂ້ອງເທົ່ານັ້ນ.

ການບັງຄັບໃຊ້ແຮງງານ:ຜູ້ຈັດຈຳໜ່າຍ ຈະບໍ່ໃຊ້ແຮງງານທີ່ຖືກບັງຄັບ, ລວມມີ ແຮງງານທີ່ຖືກຄຸມຂັງ, ແຮງງານທີ່ຖືກບັງຄັບດ້ວຍສັນຍາ ຫຼື ແບບຂ້າທາດ, ຫຼື ແຮງງານແບບມີຂໍ້ຜູກມັດ ແຕ່ບໍ່ມີຂີດຈຳກັດ. ຜູ້ຈັດຈຳໜ່າຍ ຈະນຳໃຊ້ມາດຕະການຕ່າງໆ ເພື່ອຮັບປະກັນວ່າ
ສະຖານທີ່ເຮັດວຽກບໍ່ຖືກນຳໃຊ້ໃນຮູບແບບຂອງການຄ້າມະນຸດ ແລະ ຈະກວດສອບຕ່ອງໂສ້ການຈຳໜ່າຍສິນຄ້າຂອງພວກເຂົາສຳລັບການເຄື່ອນໄຫວດັ່ງກ່າວ.

ການຄຸກຄາມ ຫຼື ລ່ວງລະເມີດ: ຜູ້ຈັດຈຳໜ່າຍຈະຕ້ອງປະຕິບັດຕໍ່ແຮງງານທຸກຄົນດ້ວຍຄວາມເຄົາລົບ ແລະ ໃຫ້ກຽດ. ຜູ້ຈັດຈຳໜ່າຍ ຈະມີຂັ້ນຕອນໃນການຮັບປະກັນວ່າ ຈະບໍ່ມີກຳມະກອນຄົນໃດທີ່ໄດ້ຮັບການກໍ່ກວນ ຫຼື ການຂົ່ມເຫັງທາງດ້ານຮ່າງກາຍ, ເພດ, ຈິດຕະສາດ ຫຼື ຄຳເວົ້າ.

ບໍ່ຈຳແນກ: ຜູ້ຈັດຈຳໜ່າຍ ຈະບໍ່ມີການຈຳແນກໃນການຈ້າງງານ, ລວມມີ ການວ່າຈ້າງ, ການຊົດເຊີຍ, ການເລື່ອນຕຳແໜ່ງ, ການລົງໂທດ, ການສິ້ນສຸດ ຫຼື ບໍານານ, ບົນພື້ນຖານຂອງ ສິດທິຍິງຊາຍ, ເຊື້ອຊາດ, ສາສະໜາ, ອາຍຸ, ຄວາມພິການ, ຄວາມມັກກ່ຽວກັບເພດ, ສັນຊາດ, ເຄືອຂ່າຍຂອງສະຫະພາບ, ແນວຄິດກ່ຽວກັບການເມືອງ, ກຸ່ມສັງຄົມ, ຫຼື ຕົ້ນກຳເນີດຂອງຊົນເຜົ່າ.

ຊົ່ວໂມງເຮັດວຽກ: ຜູ້ຈັດຈຳໜ່າຍ ຈະບໍ່ຮຽກຮ້ອງໃຫ້ກຳມະກອນເຮັດວຽກຫຼາຍກວ່າຊົ່ວໂມງປົກກະຕິ ຫຼື ເກີນຊົ່ວໂມງເຮັດວຽກທີ່ກົດໝາຍກຳນົດ. ບໍ່ໃຫ້ມີຊົ່ວໂມງເຮັດວຽກປົກກະຕິເກີນ 48 ຊົ່ວໂມງ, ແລະ ກຳມະກອນຈະໄດ້ຮັບອະນຸຍາດພັກຜ່ອນຢ່າງໜ້ອຍ 24 ຊົ່ວໂມງຕິດຕໍ່ກັນໃນທຸກໆໄລຍະເຈັດວັນ. ການເຮັດວຽກເກີນເວລາຈະຕ້ອງເປັນທີ່ຍອມຮັບຮ່ວມກັນ. ຜູ້ຈັດຈຳໜ່າຍ ຈະບໍ່ຮຽກຮ້ອງໃຫ້ເຮັດວຽກເກີນເວລາເປັນປະຈຳ ແລະ
ຈະຊົດເຊີຍການເຮັດວຽກເກີນເວລາດ້ວຍອັດຕາບໍລິການພິເສດ. ຍົກເວັ້ນກໍລະນີພິເສດ, ຜົນລວມຂອງຊົ່ວໂມງເຮັດວຽກປົກກະຕິ ແລະ ຊົ່ວໂມງເຮັດວຽກເກີນເວລາໃນອາທິດໜຶ່ງຈະຕ້ອງບໍ່ເກີນ 60 ຊົ່ວໂມງ.

ການຊົດເຊີຍ: ກຳມະກອນທຸກຄົນມີສິດໄດ້ຮັບການຊົດເຊີຍໃນອາທິດເຮັດວຽກປົກກະຕິ ທີ່ພຽງພໍຕໍ່ເງື່ອນໄຂຂອງຄວາມຈຳເປັນພື້ນຖານຂອງກຳມະກອນ ແລະ ຈັດຫາລາຍໄດ້ທີ່ມີການຄິດໄລ່ລະອຽດຈຳນວນໜຶ່ງ. ຜູ້ຈັດຈຳໜ່າຍ ຢ່າງໜ້ອຍຈະຕ້ອງຈ່າຍຄ່າແຮງງານຕ່ຳສຸດ ຫຼື ຄ່າແຮງງານທົ່ວໄປຢ່າງເໝາະສົມ, ອັນໃດກໍ່ໄດ້ທີ່ສູງກວ່າ, ທີ່ສອດຄ່ອງກັບທຸກເງື່ອນໄຂທາງດ້ານກົດໝາຍກ່ຽວກັບຄ່າແຮງງານ, ແລະ ໃຫ້ເງິນສະຫວັດດີການທີ່ກົດໝາຍກຳນົດ ຫຼື ໃນສັນຍາ. ຖ້າວ່າການຊົດເຊີຍບໍ່ໄດ້ຕາມເງື່ອນໄຂຄວາມຕ້ອງການພື້ນຖານຂອງກຳມະກອນ ແລະ ຈັດຫາລາຍໄດ້ທີ່ມີການຄິດໄລ່ລະອຽດຈຳນວນໜຶ່ງ, ຜູ້ຈັດຈຳໜ່າຍ ຈະຕ້ອງດຳເນີນມາດຕະການທີ່ເໝາະສົມໃນການສືບຕໍ່ຊອກຫາລະດັບຂອງການຊົດເຊີຍທີ່ຖືກຕ້ອງຕາມເງື່ອນໄຂທີ່ເໝາະສົມ.

ເສລີພາບຂອງສະມາຄົມ ແລະ ການຕໍ່ລອງລວມໝູ່: ຜູ້ຈັດຈຳໜ່າຍຕ້ອງຮັບຮູ້ ແລະ ເຄົາລົບສິດຂອງຜູ້ໃຊ້ແຮງງານໃນການມີເສລີພາບຂອງສະມາຄົມ ແລະ ການຕໍ່ລອງລວມໝູ່.

## *ໂລກ-ມີສະຕິ*

ຜູ້ຈັດຈຳໜ່າຍ ຈະຮັບເອົາມາດຕະການທີ່ຮັບຜິດຊອບ ໃນການຫລຸດຜ່ອນຜົນກະທົບໃນແງ່ລົບ ທີ່ການດຳເນີນງານຂອງພວກເຂົາມີຕໍ່ສິ່ງແວດລ້ອມ. ດ້ວຍອັດຕາໜ້ອຍສຸດ, ຮຽກຮ້ອງໃຫ້ຜູ້ຈັດຈຳໜ່າຍ ປະຕິບັດຕາມກົດໝາຍພາຍໃນທ້ອງຖິ່ນ ແລະ ກົດໝາຍສາກົນທຸກສະບັບ ເພື່ອປົກປ້ອງສະພາບແວດລ້ອມ, ລວມທັງ ການເກັບຮັກສາ ແລະ ການກຳຈັດສານອັນຕະລາຍ, ແລະ ໃຊ້ຄວາມພະຍາຍາມໃນການດຳເນີນທຸລະກິດໃນຮູບແບບທີ່ຫລຸດຜ່ານການຊົມໃຊ້ໄຟຟ້າ ແລະ ສ້າງສິ່ງເສດເຫຼືອ, ນຳໃຊ້ຊັບພະຍາກອນທຳມະຊາດຢ່າງເໝາະສົມ ແລະ ນຳວັດສະດຸກັບມາໃຊ້ຄືນໃຫ້ຫຼາຍທີ່ສຸດ.

## *ຄວາມໜ້າເຊື່ອຖືຂອງຜະລິດຕະພັນ*

<u>ການປະຕິບັດຕາມກົດໝາຍ</u>: ນອກຈາກຈະປະຕິບັດຕາມເງື່ອນໄຂທີ່ລະບຸໃນກົດລະບຽບນີ້ແລ້ວ, ຜູ້ຈັດຈຳໜ່າຍຈະຕ້ອງປະຕິບັດຕາມທຸກກົດໝາຍ, ກົດລະບຽບ ແລະ ສົນທິສັນຍາອື່ນໆ ທີ່ໃຊ້ສຳລັບການດຳເນີນທຸລະກິດຂອງພວກເຂົາ.

<u>ຈັນຍາບັນທຸລະກິດ</u>: ການສໍ້ລາດບັງຫຼວງ, ການບັງຄັບ, ການຍັກຍອກຊັບ ຫຼື ການນຳສະເໜີຕົວຢ່າງຜະລິດຕະພັນ ຫຼື ແຫຼ່ງທີ່ມາຂອງວັດສະດຸຂອງຜູ້ຈຳໜ່າຍທີ່ຜິດພາດ, ໃນຮູບແບບໃດກໍ່ຕາມ, ແມ່ນຫ້າມຢ່າງເດັດຂາດ. ຂໍ້ຫ້າມນີ້, ລວມທັງ, ແຕ່ບໍ່ຈຳກັດສະເພາະ, ສະເໜີ ຫຼື ຮັບສິນບົດ ເພື່ອແລກປ່ຽນກັບການໄດ້ຮັບຜົນປະໂຫຍດທີ່ບໍ່ເໝາະສົມ ແລະ ບໍ່ສາມາດເປີດເຜີຍແຫຼ່ງວັດຖຸດິບເມື່ອມີການຮ້ອງຂໍ. ການຝ່າຝືນໃນຂໍ້ຫ້າມນີ້ ອາດເຮັດໃຫ້ FOTL ຍົກເລີກສັນຍາແກ່ຜູ້ຈັດຈຳໜ່າຍທັນທີ ແລະ ອາດຈະເຮັດໃຫ້ຜູ້ຈັດຈຳໜ່າຍຖືກດຳເນີນຄະດີທາງດ້ານກົດໝາຍ.

<u>ຜູ້ຮັບເໝົາຍ່ອຍ</u>: ຜູ້ສະໜອງ ຈະບໍ່ໃຊ້ຜູ້ຮັບເໝົາຍ່ອຍ ໃນການຜະລິດສິນຄ້າ ແລະ ສ່ວນປະກອບຕ່າງໆຂອງ FOTL ໂດຍບໍ່ມີການຮັບຮອງແບບເປັນລາຍລັກອັກສອນຂອງ FOTL ກ່ອນໜ້າ ແລະ ພາຍຫຼັງທີ່ຜູ້ຮັບເໝົາຍ່ອຍຕົກລົງເຫັນດີປະຕິບັດຕາມກົດລະບຽບນີ້ເປັນລາຍລັກອັກສອນເທົ່ານັ້ນ.

<u>ການປະຕິບັດພັນທະພາສີ</u>: ຜູ້ສະໜອງ ຈະຕ້ອງປະຕິບັດຕາມທຸກກົດໝາຍວ່າດ້ວຍອາກອນທີ່ກ່ຽວຂ້ອງ, ສ້າງ ແລະ ນຳໃຊ້ໂປຣແກຣມໃນການປ້ອງກັນການປ່ຽນຖ່າຍສິນຄ້າທີ່ຜິດກົດໝາຍ.

<u>ຄວາມປອດໄພ</u>: ຜູ້ສະໜອງ ຈະຕ້ອງມີຂະບວນການໃນການປະກັນໄພ ເພື່ອບໍ່ໃຫ້ປະກົດມີສິນຄ້າທີ່ບໍ່ມີຄວາມຊັດເຈນ (ຕົວຢ່າງ: ຢາເສບຕິດ ຫຼື ສິນຄ້າທີ່ຜິດກົດໝາຍ) ໃນການຂົນສົ່ງສິນຄ້າຂອງ FOTL, ລວມທັງ ປະຕິບັດຕາມເງື່ອນໄຂຂອງ ການຮ່ວມມືພາສີ-ການຄ້າໃນການຕໍ່ຕ້ານການກໍ່ການຮ້າຍ(C-TPAT, Customs-Trade Partnership Against Terrorism) ສຳລັບການຈັດສົ່ງໄປຫາສະຫະລັດ ແຕ່ບໍ່ມີຂີດຈຳກັດ.

## *ການດຳເນີນການ ແລະ ການບັງຄັບໃຊ້*

<u>ເງື່ອນໄຂໃນການປະກາດ</u>: ຜູ້ຈຳໜ່າຍຈະຕ້ອງປະກາດແຈ້ງການກົດລະບຽບສະບັບນີ້ ໃນສະຖານທີ່ທີ່ສາມາດແນມເຫັນໄດ້ຊັດເຈນຊຶ່ງພະນັກງານ ແລະ ແຂກທີ່ມາຢ້ຽມຢາມທຸກຄົນສາມາດເຂົ້າເຖິງໄດ້ໃນພາສາທີ່ລູກຈ້າງທຸກຄົນເຂົ້າໃຈ, ລວມເຖິງແຮງງານຊາວຕ່າງປະເທດທີ່ເຂົ້າເມືອງ. ຜູ້ຈັດຈຳໜ່າຍ ຈະສື່ສານ ແລະ ຝຶກອົບຮົມໃຫ້ກຳມະກອນທຸກຄົນເປັນປະຈຳທຸກປີ ກ່ຽວກັບເນື້ອໃນທີ່ລະບຸໄວ້ໃນກົດລະບຽບນີ້.

<u>ການຮັກສາບົດບັນທຶກ</u>: ຜູ້ສະໜອງ ຈະເກັບຮັກສາບັນທຶກໄວ້ຢ່າງສົມບູນ ແລະ ຮອບຄອບ ກ່ຽວກັບທຸກເນື້ອໃນທີ່ຢູ່ໃນກົດລະບຽບນີ້ ເພື່ອອະນຸຍາດໃຫ້ມີການຢັ້ງຢືນການປະຕິບັດ.

<u>ຄຳແນະນຳຂອງຜູ້ສະໜອງ; ຄູ່ມືໃນການປະຕິບັດຕາມກົດໝາຍດ້ານສັງຄົມຂອງຜູ້ໄດ້ຮັບອະນຸຍາດ</u>: ໃນກໍລະນີທີ່ສາມາດນຳໃຊ້ໄດ້, ຜູ້ສະໜອງ ຈະປະຕິບັດຕາມເງື່ອນໄຂທີ່ມີຢູ່ໃນຄູ່ມືຂອງຜູ້ສະໜອງ ແລະ/ຫຼື ມືໃນການປະຕິບັດຕາມກົດໝາຍດ້ານສັງຄົມຂອງຜູ້ໄດ້ຮັບອະນຸຍາດ (the Licensee Social Compliance Manual), ຊຶ່ງສາມາດພົບໄດ້ຢູ່ໃນເວັບໄຊທ໌ຂອງບໍລິສັດ FOTL www.fotlinc.com.

<u>ການປະເມີນ ແລະ ການດຳເນີນການແກ້ໄຂ</u>: FOTL ນຳໃຊ້ຜູ້ກວດກສອບພາຍໃນ, ຊຶ່ງເປັນຜູ້ກວດສອບອິດສະຫຼະ, ເພື່ອຄວບຄຸມຢູ່ໃນສະຖານທີ່ ແລະ/ຫຼື ການປະເມີນຕົວຈິງ ເພື່ອໃຫ້ແນ່ໃຈວ່າໄດ້ປະຕິບັດຕາມກົດລະບຽບນີ້. ຜູ້ຈັດຈຳໜ່າຍ ຈະຮ່ວມມືຢ່າງເຕັມທີ່ກັບທຸກການປະເມີນຜົນດັ່ງກ່າວນັ້ນ ແລະ ຈະເຮັດບັນທຶກຄວາມສອດຄ່ອງຢ່າງລະອຽດເພື່ອການທົບທວນ. ຜູ້ຈັດຈຳໜ່າຍ ຈະເຮັດວຽກກັບ FOTL ເພື່ອສ້າງແຜນດຳເນີນການແກ້ໄຂ ເພື່ອແກ້ໄຂຂົງເຂດຂອງຄວາມບໍ່ສອດຄ່ອງໃນຮູບແບບທີ່ສົມເຫດສົມຜົນ.

<u>ການລາຍງານການລ່ວງລະເມີດ</u>: ເພື່ອລາຍງານການລ່ວງລະເມີດຕໍ່ກົດລະບຽບທີ່ໜ້າສົງໃສນີ້, ຈົ່ງຕິດຕໍ່ຫາ ພະແນກຄວາມຮັບຜິດຊອບທາງສັງຄົມຂອງບໍລິສັດ FOTL ທາງໂທລະສັບໄດ້ທີ່ +1-270-935-2588, ທາງອີເມວທີ່ code@fotlinc.com, ຫຼື ຜ່ານການສະແກນລະຫັດ ເພື່ອໄດ້ຮັບສິດໃຊ້ອຸປະກອນໂທລະສັບມືຖື. ກະລຸນາຈັດຫາຂໍ້ມູນລະອຽດກ່ຽວກັບພາກສ່ວນທີ່ກ່ຽວຂ້ອງ ແລະ ການລະເມີດທີ່ຖືກກ່າວຫາ, ຂັ້ນຕອນໃນການແກ້ໄຂບັນຫາໂດຍຕົງ, ແລະ ຂໍ້ມູນຕິດຕໍ່ຫາພວກເຮົາ ເພື່ອການສື່ສານກ່ຽວກັບບັນຫາທີ່ກັງວົນຢ່າງເປັນຄວາມລັບ. ພວກເຮົາຂໍຫ້າມບໍ່ໃຫ້ມີການແກ້ແຄ້ນຕໍ່ຜູ້ທີ່ລາຍງານການຝ່າຝືນກົດລະບຽບນີ້ ຫຼື ຊ່ວຍເຫຼືອ ຫຼື ເຂົ້າຮ່ວມໃນທຸກຮູບແບບໃນການສຳຫລວດການຝ່າຝືນທີ່ມີຄວາມເປັນໄປໄດ້ໃນກົດລະບຽບນີ້. ເມື່ອເຫັນວ່າມີການແກ້ແຄ້ນ ຄວນລາຍງານໄປທີ່ FOTL ຕາມທີ່ໄດ້ລະບຸໄວ້ຂ້າງເທິງ.

ສະບັບປັບປຸງ ກຸມພາ 2022

FRUIT OF THE LOOM · Bestform · BVD · SPALDING · RUSSELL ATHLETIC · VANITY FAIR LINGERIE · JERZEES